# ForInfo LAO PDR

## ຂໍ້ມູນ - ສວນປູກໄມ້ສັກຂອງຜູ້ປະກອບການຂະໜາດນ້ອຍ.

THE CENTER FOR PEOPLE AND FORESTS RECOFTC

Livelihood Improvement through Generation and Ownership of Forest Information by Local People in Products and Services Markets

### ປະຫວັດຄວາມເປັນມາ

ສວນປູກໄມ້ສັກຂອງຜູ້ປະກອບການຂະໜາດນ້ອຍ (Smallholder teak plantations) ໄດ້ເລີ່ມສ້າງ ໃນອັດຕາທີ່ເພີ່ມຂຶ້ນ ຢູ່ທາງພາກເໜືອ ຂອງ ສປປ ລາວ ຕັ້ງແຕ່ປີ 1980 ເປັນຕົ້ນມາ. ລາຍຮັບຈາກໄມ້ສັກ ເທົ່າກັບ 50% ຂອງລາຍໄດ້ປະຈໍາປີ ທີ່ເປັນເງິນສົດ ຂອງຊາວກະສິກອນ ທີ່ເປັນຜູ້ປະກອບການຂະໜາດນ້ອຍ ເຖິງແມ່ນວ່າ ໄມ້ສັກຈະຕ້ອງມີອາຍຸຫຼາຍກວ່າ 20 ປີ ຈຶ່ງ ຈະມີຂະໜາດທີ່ເໝາະສົມ ສາມາດຂາຍເປັນສິນຄ້າໄດ້ກໍ່ຕາມ. ໂດຍທົ່ວໄປແລ້ວ ຕົ້ນໄມ້ສັກ ມັກຈະຖືກຂຸດຄົ້ນກ່ອນທີ່ຈະມີມູນຄ່າ ໄດ້ເຕັມລາຄາ, ເຊິ່ງສາເຫດສ່ວນໃຫຍ່ ແມ່ນເຈົ້າຂອງສວນປູກໄມ້ສັກ ຕ້ອງການເງິນສົດ ໃນທັນທີ. ເນື່ອງຈາກວ່າ ໄມ້ສັກແມ່ນຊັບພະຍາກອນ ໂດຍທໍາມະຊາດທີ່ໃຊ້ເວລາຍາວນານ, ສະນັ້ນ ສວນປູກໄມ້ສັກ ມັກຖືກນໍາໃຊ້ເປັນຊັບສິນສໍາຮອງ, ແລະ ເກືອບວ່າເປັນປົກກະຕິທີ່ຕົ້ນໄມ້ສັກ ຈະຖືກຂຸດຄົ້ນ ຂາຍອອກກ່ອນເວລາອັນຄວນ ໂດຍບໍ່ໄດ້ພິຈາລະນາໃນການຮັກສາປ່າປູກໄວ້ ຫຼື ກາລະໂອກາດຄວາມຕ້ອງການຂອງຕະລາດຢ່າງແທ້ຈິງ. ຜູ້ປະກອບການຂະໜາດນ້ອຍ ຕ້ອງລົງທຶນປະມານ 1,500 ໂດລາສະຫະລັດ ຕໍ່ເຮັກຕາ ແລະ ຍັງຕ້ອງຈ່າຍດອກເບ້ຍ ເພື່ອສ້າງສວນປູກໄມ້ສັກໃຫ້ສໍາເລັດ. ການວິເຄາະເບື້ອງຕົ້ນ ໃນການເພີ່ມມູນຄ່າຂອງການປູກໄມ້ສັກ ແມ່ນຢູ່ໃນລະຫວ່າງອາຍຸ 12 ຫາ 25 ປີ ໃນຂອບເຂດທີ່ເພີ່ມຂຶ້ນ ລະຫວ່າງ 20-25% ຕໍ່ປີ, ຊຶ່ງເທົ່າກັບ ຫຼື ຫຼາຍກວ່າອັດຕາດອກເບ້ຍເງິນກູ້ຂອງລະບົບການເງິນຈຸລະພາກ ທີ່ເທົ່າກັບ 15-25% ຕໍ່ປີເຊັ່ນດຽວກັນ.

ເນື່ອງຈາກວ່າ ສວນປູກໄມ້ສັກເປັນແຫຼ່ງເສີມລາຍໄດ້, ຜູ້ປະກອບການຂະ ໜາດນ້ອຍ ລົງທຶນບໍ່ຫລາຍ ໃນການປັບປຸງສວນປູກໄມ້ສັກຂອງເຂົາເຈົ້າ. ໂດຍສ່ວນໃຫຍ່, ໄມ້ສັກແມ່ນຂາຍເປັນຕົ້ນ, ໂດຍບໍ່ໄດ້ມີການວັດແທກບໍລິມາດຂອງໄມ້ຕາມມູນຄ່າທາງດ້ານເສດຖະກິດ ຫຼື ມີການຕີລາຄາຄຸນນະພາບ ຂອງໄມ້ເຫຼົ່ານັ້ນ. ການເພີ່ມມູນຄ່າໂດຍຜ່ານການຂຸດຄົ້ນ, ການຈັດປະເພດໄມ້ທ່ອນ ແລະ ການຄັດເລືອກໄມ້ທ່ອນຢູ່ຂ້າງທາງ ແມ່ນບໍ່ໄດ້ເຮັດຢູ່ໃນຂັ້ນຂອງຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍແຕ່ຢ່າງໃດ. ຜົນປະໂຫຍດທາງການເງິນອັນມະຫາສານ ໄດ້ສູນເສຍໄປຍ້ອນວິທີການໄລ ຍະສັ້ນໆດັ່ງກ່າວນີ້, ເຊິ່ງເປັນບັນຫາປົກກະຕິ ທີ່ພົບເຫັນໃນການດໍາເນີນການຂອງຜູ້ປະກອບການຂະໜາດນ້ອຍ ຢູ່ທົ່ວທະວີບອາຊີ. ການຂາດເທັກໂນໂລຊີທີ່ເໝາະສົມໃນການຂຸດຄົ້ນ ເຮັດໃຫ້ທີ່ຕັ້ງສວນປູກສ່ວນໃຫ່ຍ ຕ້ອງຕັ້ງຢູ່ໃກ້ກັບແຄມທາງ ແລະ ແມ່ນໍ້າ, ເພື່ອສະດວກໃນການຂົນສົ່ງ, ແຕ່ການຄອບຄອງສະຖານທີ່ແບບນີ້ ມີມູນຄ່າເສຍໂອກາດສູງ. ໃນເວລາດຽວກັນ, ເຂດທີ່ມີທ່າແຮງສໍາລັບໄມ້ສັກສູງຊໍ້າພັດບໍ່ໄດ້ນໍາໃຊ້ ເພາະຢູ່ຫ່າງໄກສອກ ຫຼີກເຊິ່ງຍາກຕໍ່ການເຂົ້າເຖິງ. ການນໍາໃຊ້

ຢູ່ແຂວງບໍ່ແກ້ວ, ໂຄງການຟໍອິນໂຟ (ForInfo) ໄດ້ສຸມໃສ່ລະບົບການໃຫ້ຜົນຕອບແທນທາງທຸລະກິດທີ່ເປັນໄປຕາມທໍາມະຊາດ ໃນການປູກໄມ້ສັກ ເພື່ອປະກອບສ່ວນເຮັດໃຫ້ລະບົບການດໍາລົງຊີວິດຂອງຊຸມຊົນດີຂຶ້ນ ບົນພື້ນຖານຫຼັກການຄຸ້ມຄອງປ່າໄມ້ແບບຍືນຍົງ.




Map of Project Location

**ສະຖານທີ່ ຂອງໂຄງການ:**
ເມືອງປາກທາ, ແຂວງບໍ່ແກ້ວ, ສປປ ລາວ

**ໄລຍະເວລາຂອງໂຄງການ:**
3 ປີ (ເມສາ 2011 – ທັນວາ 2014)

**ຄູ່ຮ່ວມງານ:**
ພະແນກກະສິກໍາ ແລະ ປ່າໄມ້ ແຂວງບໍ່ແກ້ວ

### ວິທີການ

ໂຄງການຟໍອິນໂຟ ແມ່ນຂະບວນການສົ່ງເສີມໃນການປັບປຸງການຄຸ້ມຄອງສວນປູກໄມ້ສັກ ໃຫ້ເກີດຜົນປະໂຫຍດສູງສຸດ ໂດຍການສະໜັບສະໜູນການລົງທະບຽນສວນປູກ ໃຫ້ແກ່ຜູ້ປະກອບການຂະໜາດນ້ອຍ ແລະ ເຊື່ອມໂຍງເຂົາເຈົ້າ ເຂົ້າກັບລະບົບການເງິນຈຸລະພາກ. ຜົນໄດ້ຮັບຂອງແຜນງານປູກໄມ້ສັກ ທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ The Fund Trust (TFT) ທີ່ແຂວງຫຼວງພະບາງ (LPTP) ແມ່ນເປັນພື້ນຖານໃຫ້ແກ່ການສົ່ງເສີມວຽກງານດັ່ງກ່າວ ຢູ່ແຂວງບໍ່ແກ້ວ. TFT ໂດຍການຮ່ວມມືກັບພະແນກກະສິກໍາ ແລະ ປ່າໄມ້ ແຂວງຫຼວງພະບາງ ໄດ້ພິສູດໃຫ້ເຫັນວ່າ ໃບຢັ້ງຢືນການຄຸ້ມຄອງສວນປູກໄມ້ ໄດ້ຊ່ວຍໃຫ້ຜູ້ປະກອບການຂະໜາດນ້ອຍ ມີສິດໃນການຄອບຄອງນໍາໃຊ້ທີ່ດິນທີ່ຈະແຈ້ງຂຶ້ນ ແລະ ອະນຸຍາດໃຫ້ເຂົາເຈົ້າປູກໄມ້ສັກ ໃນຂອບເຂດທີ່ໄດ້ກໍານົດໃຫ້ ເປັນເວລາເຖິງ 30 ປີ. ນອກຈາກນັ້ນ, ກໍ່ໄດ້ເກັບກໍາການຢັ້ງຢືນມູນຄ່າຂອງໄມ້ ທີ່ໄດ້ນໍາໃຊ້ເປັນຫຼັກຄໍ້າປະກັນການກູ້ຢືມເງິນຈາກລະບົບການເງິນຈຸລະພາກ ທີ່ສະມາຄົມສິນເຊື່ອ ແລະ ຝາກເງິນປະຫຍັດຂອງແຂວງຫຼວງພະບາງ ໄດ້ສະໜອງໃຫ້ຫຼາຍກວ່າ 20 ກີລະນີ.

## Contact

**Fabian Noeske**
ForInfo Technical Advisor,

P.O. Box 1111, Kasetsart Post Office, Phahonyothin Rd. Bangkok 10903, Thailand

ForInfo@recoftc.org

Tel: 66-2-940-5700
Fax: 66-2-561-4880 or 66-2-562-0960


### About RECOFTC

RECOFTC – The Center for People and Forests is an international organization with a vision of local communities actively managing forests in Asia and the Pacific to ensure optimal social, economic, and environmental benefits. Headquartered in Bangkok, Thailand, RECOFTC works throughout Asia and the Pacific. Learn more at RECOFTC.org.

FORMIN.FINLAND.FI
MINISTRY FOR FOREIGN AFFAIRS OF FINLAND

RECOFTC
THE CENTER FOR PEOPLE AND FORESTS

ການຕີລາຄາມູນຄ່າໄມ້ຢືນຕົ້ນ ລວມມີການຕີລາຄາຄຸນນະພາບຂອງສະຖານທີ່ ຕາມຄວາມສຳພັນ ລະຫວ່າງອາຍຸ ແລະ ລວງສູງຂອງຕົ້ນໄມ້ ທີ່ໄດ້ຮັບການພັດທະນາຢູ່ປະເທດໄທ; ຂະໜາດຂອງໜ້າຕ້າງ; ແລະ ການກະຈາຍຄວາມສູງ ກັບການປະເມີນບໍລິມາດໄມ້ທາງເສດຖະກິດ ຕໍ່ມາ. ການຕີລາຄາມູນຄ່າທາງການເງິນ ແມ່ນເປັນຜົນມາຈາກການພິຈາລະນາມູນຄ່າການຊຸດຄົ້ນໄມ້ ທີ່ສຳພັນກັບໄລຍະທາງ ລະຫວ່າງສະຖານທີ່ຕັດໄມ້ ຫາແຄມທາງ ແລະ ອັດຕາສ່ວນ ຂອງບໍລິມາດຕໍ່ທ່ອນ. ຜົນການຄົ້ນຄວ້າທົດລອງໃນເບື້ອງຕົ້ນຂອງໂຄງການພໍອິນໂຟ ສະແດງໃຫ້ເຫັນວ່າ ຖ້າຫາກຄ່າໃຊ້ຈ່າຍໃນການຊຸດຄົ້ນໄມ້ທີ່ສົ່ງຮອດແຄມທາງ ລວມມີມູນຄ່າໄມ້ຢືນຕົ້ນ, ການຕັດຍອນໄມ້ຂະໜາດນ້ອຍທີ່ຕັດສາງອອກ (ທີ່ມີໜ້າຕ້າງພຽງເອິກ (DBH) ຕ່ຳກວ່າ 12 ຊັງຕີແມັດ) ທີ່ບໍ່ໃຫ້ຜົນຕອບແທນຄຸ້ມຄ່າທາງເສດຖະກິດ ສຳລັບປະເພດໄມ້ທີ່ມີໜ້າຕ້າງຂະໜາດນ້ອຍ. ດັ່ງນັ້ນ, ເທັກໂນໂລຊີໃນການຊຸດຄົ້ນ ປັດຈຸບັນພວມຢູ່ໃນໄລຍະທົດສອບ ເພື່ອປັບປຸງປະ ສິດທິພາບ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍໃນການຊຸດຄົ້ນ. ຜົນໄດ້ຮັບເບື້ອງຕົ້ນ ຊີໃຫ້ເຫັນວ່າ ການປັບປຸງປະສິດທິພາບການຊຸດຄົ້ນ ຈະມີຄວາມສຳຄັນທີ່ສຸດໃນການເພີ່ມມູນຄ່າຂອງຫຼັກຄ້ຳປະກັນ ໂດຍສະເພາະ ຕົ້ນໄມ້ຂະໜາດນ້ອຍ. ການຄົ້ນພົບໃນເບື້ອງຕົ້ນ ສະແດງໃຫ້ເຫັນວ່າ ມູນຄ່າທີ່ເປັນຫຼັກຄ້ຳປະກັນສຳລັບໄມ້ທີ່ຕັດສາງອອກຫລັງທຳອິດ ແມ່ນຢູ່ລະຫວ່າງ 1,000 ໂດລາສະຫະລັດ ສຳລັບສວນປູກ ທີ່ມີຄຸນນະພາບຕ່ຳ ຢູ່ຫ່າງໄກຈາກຫົນທາງ (ໄລຍະຫ່າງ 2 ກິໂລແມັດຂຶ້ນໄປ) ຫາ 2,500 ໂດລາສະຫະລັດ ສຳລັບສວນປູກ ທີ່ມີຄຸນນະພາບສູງ ທີ່ຢູ່ໃກ້ກັບແຄມທາງ.

ການເຂົ້າໄປໃຫ້ການຊ່ວຍເຫລືອໃນການທົດລອງຄັ້ງທຳອິດຢູ່ແຂວງບໍ່ແກ້ວ ເປັນຜົນເຮັດໃຫ້ໄດ້ສິດທິໃນການຄອບຄອງໄມ້ສັກ ມີຄວາມໝັ້ນຄົງ, ແລະ ຊັດແຈ້ງກວ່າເກົ່າ ໂດຍຜ່ານການນຳສະ ເໜີໃບຢັ້ງຢືນ ການຄຸ້ມຄອງສວນປູກໄມ້ສັກ. ໃນນີ້ ລວມມີການຕີລາຄາມູນຄ່າໄມ້ທ່ອນທີ່ມີ, ເຊິ່ງສາມາດນຳໃຊ້ ເປັນຫຼັກຄ້ຳປະກັນ ໃນການກູ້ຢືມເງິນ ກັບລະບົບການເງິນຈຸລະພາກຂອງທ້ອງຖິ່ນ. ໄລຍະເບື້ອງຕົ້ນຂອງໂຄງການ ສະແດງໃຫ້ເຫັນວ່າ ການສະໜອງທຶນໃນລະບົບການເງິນຈຸລະພາກ ມີຄວາມທ້າທາຍ, ໂດຍສະເພາະ ໄລຍະເລີ່ມນຳໃຊ້, ເມື່ອຊາວສວນ ແລະ ສະຖາບັນ ການຈັດຕັ້ງຕ່າງໆ ຍັງບໍ່ທັນໄດ້ຮັບຮູ້ທັງໝົດກ່ຽວກັບຄຸນຄ່າຂອງໃບຢັ້ງຢືນຕົ້ນໄມ້ ແລະ ສວນປູກ.

ໂຄງການພໍອິນໂຟ ພະຍາຍາມທີ່ຈະສ້າງເວທີລະດັບພາກພື້ນຂຶ້ນເປັນເທື່ອທຳອິດ ໂດຍການລວມເອົາ ບັນດາໂຄງການຕ່າງໆເຂົ້າມາມີສ່ວນຮ່ວມ ເພື່ອມາແກ້ໄຂບັນຫາດັ່ງກ່າວຢູ່ໃນເຂດລຸ່ມແມ່ນ້ຳ ເຊັ່ນ ທະນາຄານຕົ້ນໄມ້ (Tree Bank) ແລະ ເຄືອຂ່າຍຊຸມຊົນ ອິນປາງ (Inpang Community Network) ຂອງປະເທດໄທ.

| ເສັ້ນທຽບຖານ | ເປົ້າໝາຍ |
|---|---|
| **ຍັງບໍ່ມີຂໍ້ມູນກ່ຽວກັບຂອບເຂດ, ຈຳນວນຕົ້ນໄມ້ສັກ ແລະ ສະຖານທີ່ສວນປູກໄມ້ສັກ ຢູ່ແຂວງ ບໍ່ແກ້ວ** | ເຈົ້າຂອງສວນປູກໄມ້ສັກຂະໜາດນ້ອຍ ຢ່າງນ້ອຍ 50 ລາຍຈະໄດ້ຮັບການຈົດທະບຽນ ແລະ ຈັດເຂົ້າຢູ່ໃນຖານຂໍ້ມູນ ໃນເດືອນ 12/2014 |
| **ໄມ້ສັກສ່ວນໃຫ່ຍ ຈະຂາຍເປັນຕົ້ນ ໂດຍບໍ່ໄດ້ມີ ການປະເມີນທາງດ້ານບໍລິມາດ ແລະ ຄຸນນະພາບ** | ຈະຂາຍໄມ້ທ່ອນ ຈາກສວນປູກທີ່ມີໃບຢັ້ງຢືນການຄຸ້ມຄອງຕາມບໍລິມາດ ແລະ ຄຸນນະ ພາບໃນເດືອນ 12/2014 |
| **ບໍ່ສາມາດຂົນສົ່ງໄມ້ທ່ອນຂະໜາດນ້ອຍໄປສະ ໜາມໄມ້ໃກ້ກັບແຄມທາງໄດ້ ເພາະບໍ່ມີການທົດ ແທນຄ່າໃຊ້ຈ່າຍໃຫ້** | ໄດ້ທົດລອງລະບົບການຊຸດຄົ້ນໄມ້ ທີ່ມີປະສິດທິພາບ (ນຳໃຊ້ລໍ້ລາກ (sulkies) ແລະ ຈະນຳໃຊ້ຢ່າງນ້ອຍ 20 ກໍລະນີໃນເດືອນ 12/2014 |
| **ມີແຕ່ສະມາຄົມສິນເຊື່ອ ແລະ ຝາກເງິນປະຫຍັດ ຂອງແຂວງຫຼວງພະບາງ ທີ່ຮັບເອົາ (20 ກໍລະນີ)ເປັນຫຼັກຄ້ຳປະກັນການກູ້ຢືມເງິນ** | ສະຖາບັນການເງິນຈຸລະພາກ ອື່ນໆ ຈະອອກເງິນກູ້ໃຫ້ ຢ່າງນ້ອຍ 10 ລາຍ ໃນວົງເງິນ ຕ່ຳສຸດ 5,000 ໂດລາສະຫະລັດ ຢູ່ແຂວງບໍ່ແກ້ວ ໃນເດືອນ 12/2014 |

## ຜົນໄດ້ຮັບ ຂອງໂຄງການ

1. ສະໜອງໃບຢັ້ງຢືນການຄຸ້ມຄອງ ທີ່ຮັບຮູ້ຫຼັກຄໍ້າປະກັນໃນການກູ້ຢືມເງິນ ວ່າເປັນຫົ້ນທີ່ຈະຕ້ອງສົ່ງ ຈາກສະຖາບັນການເງິນ ໃຫ້ແກ່ເຈົ້າຂອງສວນປູກໄມ້ສັກຂະໜາດນ້ອຍ.

2. ອຳນວຍຄວາມສະດວກໃນໄລຍະເບື້ອງຕົ້ນ ໃນການໃຫ້ໄດ້ໃບຕາດິນ ເພື່ອໃຫ້ຊາວສວນ ມີສິດນຳໃຊ້ທີ່ດິນຊົ່ວຄາວນັ້ນ.

3. ເພີ່ມເວລາຂອງຮອບວຽນປ່າປູກ ໂດຍຜ່ານກົນໄກຫຼັກຄໍ້າປະກັນ ແລະ ຫຼຸດຜ່ອນຈຳນວນໄມ້ສັກ ທີ່ຂຸດຄົ້ນກ່ອນເວລາອັນຄວນ ໃຫ້ມີໜ້ອຍທີ່ສຸດ.

4. ເພີ້ມປະສິດທິພາບໃນການຂຸດຄົ້ນ ແລະ ການຂົນສົ່ງ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ ໂດຍສະເພາະ ໄມ້ ທີ່ມີໜ້າຕ້າງຂະໜາດນ້ອຍ.

5. ປັບປຸງຖານະໃນການເຈລະຈາຕໍ່ລອງ ຂອງຜູ້ປະກອບການໄມ້ສັກຂະໜາດນ້ອຍ ກັບໂຮງເລື່ອຍ ໂດຍການນຳໃຊ້ການວັດແທກບໍລິມາດໄມ້ທ່ອນ ແລະ ຂໍ້ມູນກ່ຽວກັບກົດລະບຽບ ໃນການຄັດເລືອກ ແລະ ຈັດປະເພດໄມ້ທ່ອນ.

## ຜົນສຳເລັດ ແລະ ຜົນກະທົບ ຂອງໂຄງການ

ໂຄງການພໍ່ອິນໂຟ ໄດ້ຝຶກອົບຮົມພະນັກງານປ່າໄມ້ ໃນການລົງສຳຫຼວດພື້ນທີ່ການຂຶ້ນທະບຽນສວນປູກ; ການສຳຫລວດປ່າໄມ້, ການກະກຽມ ແລະ ການອອກໃບຢັ້ງຢືນສວນປູກ ແລະ ການນຳໃຊ້ເຄື່ອງ ມືຕ່າງໆ ເຊັ່ນ: ລະບົບການຈັບຕຳແໜ່ງ (GPS) ແລະ ຊອບແວ ໃນການສ້າງແຜນທີ່. ນອກຈາກນັ້ນ ຍັງໄດ້ຈັດຝຶກອົບຮົມໃນການບັນທຶກ ແລະ ການຈັດຕັ້ງກ່ຽວກັບການຢັ້ງຢືນສວນປູກ ເຂົ້າໃນຖານຂໍ້ມູນ ເຊິ່ງຈະຊ່ວຍໃຫ້ໂຮງເລື່ອຍ ແລະ ພໍ່ຄ້າໄມ້ສາມາດເຂົ້າເຖິງ ຕະລາດໄດ້ຫລາຍຂຶ້ນ ໂດຍຜ່ານການເຂົ້າເຖິງຂໍ້ມູນຂ່າວສານຕ່າງໆທີ່ໄດ້ຮັບການປັບປຸງ.

ໂຄງການພໍ່ອິນໂຟ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງບໍ່ແກ້ວ ໄດ້ອຳນວຍຄວາມສະດວກໃນການຮ່ວມມື, ສ້າງຄວາມເປັນເອ ກະພາບ ແລະ ຄວາມໂປ່ງໃສ ລະຫວ່າງ ຜູ້ປະກອບການຂະໜາດນ້ອຍ, ພະນັກງານປ່າໄມ້, ເຈົ້າຂອງໂຮງເລື່ອຍ, ພໍ່ຄ້າໄມ້ ແລະ ສະມາຄົມສິນເຊື່ອ ເພື່ອໃຫ້ຜູ້ປະກອບການຂະໜາດນ້ອຍ ໄດ້ຮັບຜົນປະໂຫຍດສູງສຸດ ແລະ ມີຄວາມຍືດຍຸ່ນຫຼາຍຂຶ້ນ ໃນການຄຸ້ມຄອງສວນປູກໄມ້ສັກຂອງເຂົາເຈົ້າ. ສະຫລຸບແລ້ວ, ຜົນກະທົບທີ່ໂຄງການຄາດຫວັງ ຈະເປັນລະບົບການດຳລົງຊີວິດທີ່ອີງໃສ່ປ່າໄມ້ແບບຍືນຍົງ ແລະ ມີການແຂ່ງຂັນ. ການສ້າງ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສວນປູກໄມ້ສັກ ໃຫ້ແກ່ເວທີການຕະລາດຕ່າງໆ ເປັນຍຸດທະສາດອັນພື້ນຖານ ທີ່ໂຄງການພໍ່ອິນໂຟ ຫວັງທີ່ຈະຈັດຕັ້ງປະຕິບັດໃຫ້ສຳເລັດ ໃນໄລຍະທ້າຍຂອງໂຄງການ. ຂະບວນການດັ່ງກ່າວ ໄດ້ຮັບການສະໜັບສະໜູນໂດຍການນຳໃຊ້ວິທີການໃໝ່ໆ ເພື່ອທີ່ຈະເພີ່ມປະສິດທິພາບໂດຍການນຳໃຊ້ເທັກໂນໂລຊີຂະໜາດນ້ອຍ.



ຜູ້ທີ່ໄດ້ຮັບໃບຢັ້ງຢືນສວນປູກໄມ້ສັກ ຄົນທຳອິດ ຂອງໂຄງການພໍ່ອິນໂຟ ຢູ່ບ້ານຫ້ວຍທອງ



ພະນັກງານ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພະນັກງານຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການຝຶກອົບຮົມກ່ຽວກັບການຕີລາຄາໄມ້ຢືນຕົ້ນ



ສຳລັບການຂາຍ: ທ່ອນໄມ້ສັກທີ່ລົງທະບຽນ ຢູ່ແຄມທາງ

**ກ່ອງຂໍ້ມູນ ຂອງໂຄງການພໍ່ອິນໂຟ**

ໂຄງການພໍ່ອິນໂຟ ໄດ້ຮັບການສະໜັບສະໜູນດ້ານການເງິນ ຈຳນວນສອງລ້ານຢູໂຣ ຈາກກະຊວງການຕ່າງປະເທດ ຂອງປະເທດຟິນແລນ ເພື່ອໃຫ້ການຊ່ວຍເຫລືອຊຸມຊົນ ໃນ ສປປ ລາວ, ກຳປູເຈຍ , ປະເທດໄທ ແລະ ຫວຽດນາມ, ໂດຍການເຊື່ອມໂຍງເຂົາເຈົ້າ ເຂົ້າກັບຕະລາດທີ່ມີຢູ່ແລ້ວ ແລະ ຕະລາດໃໝ່ໆເຊັ່ນ: ການບໍລິການລະບົບນິເວດ, ແລະ ຊ່ວຍເຫຼືອເຂົາເຈົ້າ ໃຫ້ໄດ້ຮັບປະໂຫຍດສູງສຸດ ຈາກການນຳໃຊ້ປ່າໄມ້ແບບຍືນຍົງ. ໃນນັ້ນ ວຽກງານຂອງໂຄງການພໍ່ອິນໂຟ ແມ່ນຜະລິດຂໍ້ມູນຂ່າວສານທີ່ສຳຄັນກັບຊຸມຊົນ ເພື່ອປັບປຸງການເຂົ້າເຖິງການຕະລາດ ແລະ ເພື່ອໃຫ້ມີຄວາມໝັ້ນຄົງໃນການດຳລົງຊີວິດ ເມື່ອນຳໃຊ້ປ່າໄມ້ແບບຍືນຍົງ ແລະ ມີປະສິດທິພາບ. ຊອກຮູ້ເພີ່ມໄດ້ທີ່:
http://www.recoftc.org/site/resources/ForInfo/


Copyright ©2013 RECOFTC – The Center for People and Forests

THE CENTER FOR PEOPLE AND FORESTS

**About RECOFTC**

RECOFTC is the only international not-for-profit organization that specializes in capacity building for community forestry and devolved forest management in Asia-Pacific. Beginning as a knowledge hub in 1987, RECOFTC has actively supported the development of community forestry institutions, policies and programs in the region.

This Factsheet was published by:
RECOFTC – The Center for People and Forests
P.O. Box 1111
Kasetsart Post Office
Bangkok 10903, Thailand

Learn more about the ForInfo program on our website:
http://www.recoftc.org/site/resources/ForInfo/

**Copyright** © 2011 RECOFTC – The Center for People and Forests gives permission to make digital or hard copies of portions or all of this work for educational or non-commercial purposes without fee or prior written consent provided the copies are not made or distributed for profit or commercial advantage and that the source is fully acknowledged. Copies of this work, and translations of this work, should bear this full citation on the first page in print or the first screen in digital media. Copyrights for components of this work owned by others than RECOFTC must be honored. Abstracting with credit is permitted. To copy otherwise, to republish, to post on servers, or to redistribute to lists, requires prior specific permission. Send written requests for republication to RECOFTC – The Center for People and Forests, P.O. Box 1111, Kasetsart Post Office, Bangkok 10903, Thailand. Please email your queries to forinfo@recoftc.org.

**Disclaimer**: The views expressed in this document do not necessarily reflect those of RECOFTC – The Center for People and Forests and The Ministry of Foreign Affairs of Finland. We disclaim any errors or omissions in the translation of this document from the original version in English into other languages.